# **ພຣູ**ຫ່ວງໃຍ+ ແລະ<br>**ພຣູ**ຍົກເວັ້ນຄ່າທຳນຽມ

ຮັບຜົນປະໂຫຍດເພີ່ມເຕີມເພື່ອແບ່ງເບົາພາລະທາງການເງິນເພື່ອຊ່ວຍທ່ານໃນເວລາທີ່ຫຍຸ້ງຍາກທີ່ສຸດ

PRUDENTIAL




ທ່ານສາມາດໃຊ້ຊີວິດໂດຍປາສະຈາກຄວາມກັງວົນພາລະທາງການເງິນ ເຖິງແມ້ວ່າຈະມີເຫດບໍ່ຄາດຝັນເກີດຂຶ້ນຈາກການເຈັບປ່ວຍຮ້າຍແຮງໃນຂະນະທີ່ທ່ານກຳລັງພະຍາຍາມເຮັດຕາມເປົ້າໝາຍທີ່ຕັ້ງໄວ້ໃນຊີວິດຂອງທ່ານ. ສັນຍາປະກັນໄພເພີ່ມເຕີມ: **ພຣູ**ຫ່ວງໃຍ+ ແລະ **ພຣູ**ຍົກເວັ້ນຄ່າທຳນຽມ ຊ່ວຍປົກປ້ອງການເງິນໃນອະນາຄົດຂອງທ່ານຈາກຄວາມບໍ່ແນ່ນອນ.

ແນະນຳສັນຍາປະກັນໄພເພີ່ມເຕີມ: **ພຣູທ່ວງໃຍ+** ແລະ **ພຣູຍົກເວັ້ນຄ່າທຳນຽມ** ຊຶ່ງເປັນສັນຍາປະກັນໄພເພີ່ມເຕີມທີ່ໃຫ້ຄຸ້ມຄອງທາງການເງິນ ມັນຍັງຊ່ວຍໃຫ້ທ່ານມຸ່ງໝັ້ນກັບເປົ້າໝາຍໃນຊີວິດໄດ້ຫຼາຍຂຶ້ນ ແລະ ຍັງປົກປ້ອງທ່ານຈາກຄວາມບໍ່ແນ່ນອນ.

ດ້ວຍການຄຸ້ມຄອງການເຈັບປ່ວຍທີ່ຮ້າຍແຮງສູງສຸດເຖິງ 50 ລາຍການ ຊຶ່ງມັນຈະຊ່ວຍໃຫ້ທ່ານ ແລະ ຄອບຄົວຫຼຸດຜ່ອນຄວາມກັງວົນທາງການເງິນໄດ້ຫຼາຍຂຶ້ນ. ໃນກໍລະນີທ່ານກວດພົບການເຈັບປ່ວຍຮ້າຍແຮງໄລຍະເລີ່ມຕົ້ນຈະໄດ້ຮັບສິນປະກັນໄພທັນທີ 25% ຈາກວົງເງິນຄຸ້ມຄອງຂອງຜົນປະໂຫຍດສັນຍາປະກັນໄພເພີ່ມເຕີມ: **ພຣູທ່ວງໃຍ+** ແລະ ຖ້າຫາກທ່ານກວດພົບການເຈັບປ່ວຍຮ້າຍແຮງໄລຍະສຸດທ້າຍ ທ່ານຈະໄດ້ຮັບສິນປະກັນໄພສູງສຸດເຖິງ 100%** ຈາກວົງເງິນຄຸ້ມຄອງຂອງຜົນປະໂຫຍດສັນຍາປະກັນໄພເພີ່ມເຕີມ: **ພຣູທ່ວງໃຍ+**

ຍິ່ງໄປກວ່ານັ້ນ ສັນຍາປະກັນໄພເພີ່ມເຕີມ **ພຣູຍົກເວັ້ນຄ່າທຳນຽມ**ຍັງໃຫ້ຜົນປະໂຫຍດໃນການຍົກເວັ້ນຄ່າທຳນຽມປະກັນໄພຈົນກວ່າສັນຍາຂອງທ່ານສິ້ນສຸດຕາມເງື່ອນໄຂການເຈັບປ່ວຍຮ້າຍແຮງໄລຍະສຸດທ້າຍ 25 ລາຍການ. ສັນຍາປະກັນໄພເພີ່ມເຕີມ: **ພຣູທ່ວງໃຍ+** ແລະ ພຣູຍົກເວັ້ນຄ່າທຳນຽມ ສາມາດຊ່ວຍໃຫ້ທ່ານມຸ່ງໝັ້ນກັບເປົ້າໝາຍໃນຊີວິດໄດ້ຫຼາຍຂຶ້ນ ແລະ ຍັງຊ່ວຍຫຼຸດຜ່ອນຄວາມກັງວົນ ແລະ ແບ່ງເບົາພາລະທາງການເງິນໃນກໍລະນີເຈັບປ່ວຍຮ້າຍແຮງ. ອະນາຄົດທີ່ທ່ານຄວບຄຸມ ແລະ ປົກປ້ອງຄວາມໝັ້ນຄົງທາງການເງິນໄດ້ດ້ວຍຕົວທ່ານເອງ.

ເກນອາຍຸທີ່ສາມາດສະໝັກໄດ້ແມ່ນ 18 – 60 ປີ ແລະ ໄລຍະເວລາຄຸ້ມຄອງເລີ່ມຕົ້ນ 5 ຫາ 15 ປີ.*

**ສັນຍາປະກັນໄພເພີ່ມເຕີມນີ້* ໃຫ້ຜົນປະໂຫຍດແກ່ຕົວທ່ານເອງ ແລະ ຄົນທີ່ທ່ານຮັກດັ່ງລຸ່ມນີ້.**
ພາບທີ່ສະແດງໃຫ້ທ່ານເຫັນແມ່ນຕົວຢ່າງແຜນປະກັນພື້ນຖານ ພ້ອມກັບສັນຍາປະກັນໄພເພີ່ມເຕີມ: **ພຣູທ່ວງໃຍ+** ແລະ **ພຣູຍົກເວັ້ນຄ່າທຳນຽມ**




**ໝາຍເຫດສຳຄັນ**:

* ຂຶ້ນກັບຂໍ້ຈຳກັດຂອງແຜນປະກັນພື້ນຖານ ແລະ ເງື່ອນໄຂຂອງຜະລິດຕະພັນ.

** ຖ້າຫາກທ່ານໄດ້ຮັບຜົນປະໂຫຍດ 25% ຂອງວົງເງິນຄຸ້ມຄອງໃນກໍລະນີກວດພົບພະຍາດຮ້າຍແຮງໄລຍະເລີ່ມຕົ້ນ ແລະ ຈຳນວນທີ່ຍັງເຫຼືອແມ່ນຈະຖືກຈ່າຍໃຫ້ໃນກໍລະນີກວດພົບພະຍາດຮ້າຍແຮງໄລຍະສຸດທ້າຍ.

*** ຜົນປະໂຫຍດເມື່ອຢູ່ຄົບສັນຍາ ແມ່ນຈະຖືກຈ່າຍໃຫ້ກໍ່ຕໍ່ເມື່ອບໍ່ມີເຫດການບໍ່ຄາດຝັນ ເກີດຂຶ້ນໃນລະຫວ່າງສັນຍາມີຜົນບັງຄັບໃຊ້ຈົນເຖິງມື້ສິ້ນສຸດສັນຍາຕາມໄລຍະເວລາທີ່ກຳນົດໄວ້ ແລະ ຈຳນວນເງິນຈະໄດ້ຮັບແມ່ນຂຶ້ນກັບແຜນປະກັນພື້ນຖານ ແລະ ໄລຍະເວລາຂອງສັນຍາທີ່ທ່ານເລືອກ ເນື່ອງຈາກວ່າ ຜົນປະໂຫຍດເມື່ອຢູ່ຄົບສັນຍາ ແມ່ນອີງໃສ່ແຜນປະກັນພື້ນຖານເທົ່ານັ້ນ, ຄ່າທຳນຽມທີ່ຕ້ອງຈ່າຍສຳລັບແຜນພື້ນຖານ ແລະ ສັນຍາປະກັນໄພເພີ່ມເຕີມ ອາດຫຼາຍກວ່າ ຜົນປະໂຫຍດເມື່ອຢູ່ຄົບສັນຍາ

**** ວົງເງິນຄຸ້ມຄອງຂອງແຜນປະກັນພື້ນຖານສຳລັບກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ ລວມເຖິງ ສັນຍາປະກັນໄພເພີ່ມເຕີມ: ພຣູທ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ ແມ່ນໃຫ້ຜົນປະໂຫຍດສູງສຸດເຖິງ 200% ກໍລະນີບໍ່ເກີດຈາກອຸປະຕິເຫດ ຫຼື ສູງສຸດເຖິງ 300% ກໍລະນີເກີດຈາກອຸປະຕິເຫດ.

ພາຍໃຕ້ ສັນຍາປະກັນໄພເພີ່ມເຕີມ: ພຣູທ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ ເມື່ອທ່ານກວດພົບການເຈັບປ່ວຍຮ້າຍແຮງໄລຍະສຸດທ້າຍ ຄ່າທຳນຽມປະກັນໄພຂອງທ່ານຈະຖືກຍົກເວັ້ນ.

## ກໍລະນີສຶກສາ

**ທ້າວ ສິດ**

ເພດຊາຍ ອາຍຸ 30 ປີ

ໄດ້ຊື້ແຜນປະກັນພື້ນຖານ ພຣູໄລ້ ເຊັບເວີ ພລັສ ຈາກ ພຣູເດັນໂຊລ໌ ລາວ (ຮູບແບບຊຳລະຄ່າທຳນຽມປົກກະຕິ) ພ້ອມກັບຜົນປະໂຫຍດສັນຍາປະກັນໄພເພີ່ມເຕີມ: **ພຣູຫ່ວງໃຍ+** ແລະ **ພຣູຍົກເວັ້ນຄ່າທຳນຽມ**

ວົງເງິນຄຸ້ມຄອງຂອງແຜນປະກັນພື້ນຖານ
**(ພຣູໄລ້ ເຊັບເວີ ພລັສ)**
**60.000.000 ກີບ**

ວົງເງິນຄຸ້ມຄອງຂອງສັນຍາປະກັນໄພເພີ່ມເຕີມ
**(ພຣູຫ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ)**
**60.000.000 ກີບ**

ໄລຍະເວລາຄຸ້ມຄອງ
**10 ປີ**

ຮູບແບບການຊຳລະຄ່າທຳນຽມ
**ລາຍປີ**

## ຄ່າທຳນຽມທີ່ ທ້າວສິດ ຕ້ອງຈ່າຍ

ຄ່າທຳນຽມລາຍປີເລີ່ມຕົ້ນສຳລັບແຜນປະກັນພື້ນຖານ (ພຣູໄລ້ ເຊັບເວີ ພລັສ) ທີ່ຕ້ອງຈ່າຍ = **3.053.500 ກີບ**

ຄ່າທຳນຽມລາຍປີເລີ່ມຕົ້ນສຳລັບຜົນປະໂຫຍດສັນຍາປະກັນໄພເພີ່ມເຕີມ: **ພຣູຫ່ວງໃຍ+** ແລະ **ພຣູຍົກເວັ້ນຄ່າທຳນຽມທີ່ຕ້ອງຈ່າຍ = 207.500 ກີບ***

ຈຳນວນຄ່າທຳນຽມລາຍປີທັງໝົດທີ່ຕ້ອງຈ່າຍ = **3.261.000 ກີບ**

*ຄ່າທຳນຽມປະກັນໄພຂອງສັນຍາເພີ່ມເຕີມ (ພຣູຫ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ) ແມ່ນບໍ່ຄົງທີ່

ໃນກໍລະນີທ້າວ ສິດ ກວດພົບການເຈັບປ່ວຍຮ້າຍແຮງໄລຍະເລີ່ມຕົ້ນໃນປີທີ 2 ແລະ ໄລຍະສຸດທ້າຍໃນປີທີ 4. ໂຊກບໍ່ດີ ທ້າວ ສິດ ໄດ້ເສຍຊີວິດໃນປີທີ 8.

**ຄ່າທຳນຽມ** (ແຜນປະກັນພື້ນຖານ + ສັນຍາປະກັນໄພເພີ່ມເຕີມ: ພຣູຫ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ)

| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 |
|---|---|---|---|---|---|---|---|---|---|
| ✓ | ✓ | ✓ | ✓ | | | | ✗ ເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ | | |

ຫຼັງຈາກປີທີ 4 ແມ່ນທ້າວ ສິດ ບໍ່ຈຳເປັນຕ້ອງຈ່າຍຄ່າທຳນຽມປະກັນໄພໃນກໍລະນີກວດພົບການເຈັບປ່ວຍຮ້າຍແຮງໄລຍະສຸດທ້າຍ ເນື່ອງຈາກວ່າລາວຊື້ຜົນປະໂຫຍດສັນຍາປະກັນໄພເພີ່ມເຕີມ: ພຣູຫ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ. ໃນກໍລະນີທ່ານກວດພົບການເຈັບປ່ວຍຮ້າຍແຮງໄລຍະສຸດທ້າຍໃນປີທີ 4 ຫຼື ປີຕໍ່ໄປ, ແບບປະກັນພື້ນຖານຈະຍັງໃຫ້ການຄຸ້ມຄອງ ກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຜົນປະໂຫຍດເມື່ອຢູ່ຄົບສັນຍາ.

**ຄ່າທຳນຽມປະກັນໄພ ປີທີ 1 - ປີທີ 4**

ແຜນປະກັນພື້ນຖານ **12.214.000 ກີບ** + ສັນຍາປະກັນໄພເພີ່ມເຕີມ: ພຣູຫ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ **830.000 ກີບ** = ຄ່າທຳນຽມທີ່ຕ້ອງຈ່າຍທັງໝົດ **13.044.000 ກີບ**

## ຜົນປະໂຫຍດທີ່ ທ້າວ ສິດ ຈະໄດ້ຮັບ

**1**
ຜົນປະໂຫຍດຄອບຄົວຂອງທ້າວ ສິດ ຈະໄດ້ຮັບໃນກໍລະນີກວດພົບການເຈັບປ່ວຍຮ້າຍແຮງ:

**2**
ຜົນປະໂຫຍດຄອບຄົວຂອງທ້າວ ສິດ ຈະໄດ້ຮັບໃນກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ ຈາກ:

RIP ຫຼື ຫຼື

**ຜົນປະໂຫຍດ**

| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 |
|---|---|---|---|---|---|---|---|---|---|
| | ✗ | | ✗ | | | | ✗ | | |

- ປີທີ 2 — ກໍລະນີກວດພົບການເຈັບປ່ວຍຮ້າຍແຮງໄລຍະເລີ່ມຕົ້ນ — **15.000.000 ກີບ**
- ປີທີ 4 — ກໍລະນີກວດພົບການເຈັບປ່ວຍຮ້າຍແຮງໄລຍະສຸດທ້າຍ — **45.000.000 ກີບ**
- ປີທີ 8 — ກໍລະນີເສຍຊີວິດ/ເສຍອົງຄະແບບສິ້ນເຊີງ ແລະ ຖາວອນທີ່ບໍ່ເກີດຈາກອຸປະຕິເຫດ — **60.000.000 ກີບ**

or

- ປີທີ 8 — ກໍລະນີເສຍຊີວິດ/ເສຍອົງຄະແບບສິ້ນເຊີງ ແລະ ຖາວອນທີ່ເກີດຈາກອຸປະຕິເຫດ — **120.000.000 ກີບ**

## ຜົນປະໂຫຍດ

15.000.000 ກີບ + 45.000.000 ກີບ + 60.000.000 ກີບ
**120.000.000 ກີບ**
(ກໍລະນີທີ່ບໍ່ເກີດຈາກອຸປະຕິເຫດ)

15.000.000 ກີບ + 45.000.000 ກີບ + 120.000.000 ກີບ
**180.000.000 ກີບ**
(ກໍລະນີທີ່ເກີດຈາກອຸປະຕິເຫດ)

**ຫຼັງຈາກປີທີ 4 ເຖິງປີທີ 8**
ຄ່າທຳນຽມແຜນປະກັນພື້ນຖານຂອງທ້າວ ສິດ ຈຳນວນ 12.214.000 ກີບຈະຖືກຍົກເວັ້ນ

***ໝາຍເຫດສຳຄັນ:*** *ຄ່າທຳນຽມແມ່ນຂຶ້ນກັບເງື່ອນໄຂຂອງແຕ່ລະບຸກຄົນ ແລະ ຈຳນວນເງິນຄ່າທຳນຽມແມ່ນໄດ້ກຳນົດຕາມເງື່ອນໄຂຂອງ ທ້າວ ສິດ. ຈຳນວນເງິນຄຸ້ມຄອງ ແລະ ຜົນປະໂຫຍດໃນຕາຕະລາງຈະຖືກກຳນົດໃນເວລາທີ່ຊື້. ທ່ານສາມາດເລືອກຊື້ ສັນຍາປະກັນໄພເພີ່ມເຕີມ: ພຣູຫ່ວງໃຍ+ ແລະ ພຣູຍົກເວັ້ນຄ່າທຳນຽມ (ຜົນປະໂຫຍດເພີ່ມເຕີມ) ເພື່ອຄັດຕິດກັບແຜນປະກັນພື້ນຖານຂອງພຣູເດັນໂຊລ໌ ລາວ ຕາມຄວາມຕ້ອງການຂອງທ່ານ. ຂໍ້ກຳນົດ ແລະ ເງື່ອນໄຂຢູ່ໃນແຜ່ນພັບນີ້ແມ່ນບໍ່ຄົບຖ້ວນສົມ ບູນ. ສຳລັບຂໍ້ມູນເພີ່ມຕື່ມ ກະລຸນາກວດເບິ່ງລາຍລະອຽດທີ່ຂໍ້ກຳນົດ ແລະ ເງື່ອນໄຂຂອງຜະລິດຕະພັນໄດ້.*


**ບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ (ລາວ) ຈຳກັດ**

ຊັ້ນ 5 ອາຄານ ວຽງຈັນເຊັນເຕີ້, ຖະໜົນ ຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ

(856) 21 211123 info@prudential.la www.prudential.la ໜຶ່ງໃນກຸ່ມ ບໍລິສັດ ພຣູເດັນໂຊລ໌ ມະຫາຊົນ